ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 272 /ລບ
ນະຄອນຫຼວງວຽງຈັນ, ວັນທີ 16.9.2015

# ດຳລັດ
# ວ່າດ້ວຍການປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ ແລະຄຸນງາມຄວາມດີ ໃນພາລະກິດ ຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 01/ສພຊ, ລົງວັນທີ 12 ເມສາ 2003;
- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 09/ສພຊ, ລົງວັນທີ 12 ຕຸລາ 2002;
- ອີງຕາມ ກົດໝາຍວ່າດ້ວຍຜັງເມືອງສະບັບເລກທີ 03/99/ສພຊ, ລົງວັນທີ 03 ເມສາ 1999;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 05/ສພຊ, ລົງວັນທີ 18 ກໍລະກົດ 2006;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງແຮງງານ ແລະສະຫວັດດີການສັງຄົມ ສະບັບເລກທີ 2622/ຮສສ, ລົງວັນທີ 9 ກໍລະກົດ 2015.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກເພື່ອກຳນົດຫຼັກການ, ລະບຽບການ ແລະວິທີການ ໃນການຈັດຕັ້ງປະຕິບັດນະໂຍບາຍຂອງພັກ-ລັດ ດ້ວຍຮູບການໃຫ້ອຸດໜູນທາງດ້ານວັດຖຸ ຫຼືເງິນສົດຈາກງົບປະມານຂອງລັດ ແລະການປະກອບສ່ວນຂອງພາກເອກະຊົນ, ບຸກຄົນ, ນິຕິບຸກຄົນ ແລະອົງການຈັດຕັ້ງຕ່າງໆທີ່ສະແດງເຖິງຄວາມກະຕັນຍູຮູ້ບຸນຄຸນຕໍ່ຜູ້ມີຜົນງານ ແລະຄຸນງາມຄວາມດີໃນພາລະກິດການປະຕິວັດຊາດ ປະຊາທິປະໄຕ ໂດຍໃຫ້ສອດຄ່ອງກັບຄວາມສາມາດ ແລະສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມ ຂອງປະເທດລາວເຮົາເພື່ອໃຫ້ທົ່ວສັງຄົມໄດ້ມີສ່ວນຮ່ວມໃນການຕອບແທນບຸນຄຸນ ແລະໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນໃນທົ່ວປະເທດ.

**ມາດຕາ 2 ຜູ້ທີ່ມີຜົນງານ ແລະຄຸນງາມຄວາມດີ**

ຜູ້ທີ່ມີຜົນງານ ແລະຄຸນງາມຄວາມດີໃນພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ ແມ່ນບຸກຄົນທີ່ຍັງມີຊີວິດ ແລະເສຍສະລະຊີວິດ, ທີ່ໄດ້ອຸທິດເລືອດເນື້ອ, ເຫື່ອແຮງ, ສະຕິປັນຍາເຂົ້າໃນພາລະກິດປະຕິວັດຊາດ ປະຊາທິປະໄຕ ແມ່ນຜູ້ທີ່ມີຄວາມຈົງຮັກພັກດີ, ຕັ້ງຕໍ່ບໍລິສຸດຕໍ່ພັກ-ລັດ ແລະປະຊາຊົນຢ່າງສະເໝີຕົ້ນສະເໝີປາຍ ຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ຂອງດຳລັດສະບັບນີ້.

**ມາດຕາ 3 ເປົ້າໝາຍທີ່ຈະໄດ້ຮັບນະໂຍບາຍ**

ບຸກຄົນຢູ່ໃນເປົ້າໝາຍທີ່ຈະໄດ້ຮັບການປະຕິບັດນະໂຍບາຍຕ້ອງມີເງື່ອນໄຂ ດັ່ງນີ້:

1. ພະນັກງານອາວຸໂສ ທີ່ເຂົ້າການປະຕິວັດແຕ່ປີ 1954 ຄືນຫຼັງ, ມີອາຍຸການປະຕິວັດ ສິບປີຕໍ່ເນື່ອງຂຶ້ນໄປ;
2. ວິລະຊົນແຫ່ງຊາດ ແລະນັກຮົບແຂ່ງຂັນ;
3. ຜູ້ເສຍສະລະຊີວິດໃນການສູ້ຮົບ ຫຼືຮັບໃຊ້ການສູ້ຮົບ ໃນພາລະກິດການປະຕິວັດຊາດ ປະຊາທິປະໄຕ ທີ່ບໍ່ທັນໄດ້ຮັບການປະຕິບັດນະໂຍບາຍອຸດໜູນໃດມາກ່ອນ;
4. ຜູ້ເສຍອົງຄະປະເພດພິເສດ, ຜູ້ດູແລ, ຜູ້ເສຍອົງຄະປະເພດ I-IV ໃນການສູ້ຮົບ ຫຼືຮັບໃຊ້ການສູ້ຮົບໃນພາລະກິດການປະຕິວັດຊາດ ປະຊາທິປະໄຕ;
5. ພະນັກງານ, ທະຫານ, ຕຳຫຼວດ ທີ່ເຂົ້າການປະຕິວັດແຕ່ ວັນທີ 31 ທັນວາ ປີ 1974 ຄືນຫຼັງ ທີ່ບໍ່ໄດ້ຮັບການປະຕິບັດນະໂຍບາຍອຸດໜູນໃດມາກ່ອນ;
6. ຄະນະຕາແສງ, ຄະນະແນວລາວຮັກຊາດ, ກອງຫຼອນ ທີ່ໄດ້ສູ້ຮົບ ຫຼືຮັບໃຊ້ການສູ້ຮົບໃນພາລະກິດການປະຕິວັດຊາດປະຊາທິປະໄຕ ເຖິງ ວັນທີ 31 ທັນວາປີ 1974 ທີ່ມີອາຍຸການແຕ່ ສິບປີຕໍ່ເນື່ອງຂຶ້ນໄປ;
7. ພໍ່ແມ່ທີ່ມີລູກເສຍສະລະຊີວິດໝົດ ໃນພາລະກິດການປະຕິວັດຊາດ ປະຊາທິປະໄຕ ຊຶ່ງພໍ່ແມ່ຍັງມີຊີວິດຢູ່ຂາດຜູ້ລ້ຽງດູ.

## ໝວດທີ 2
## ການຫັນສິດນຳໃຊ້ທີ່ດິນ, ເຮືອນ, ພາຫະນະທີ່ລັດຄຸ້ມຄອງ ແລະກູ້ຢືມເງິນເພື່ອປຸກສ້າງ-ສ້ອມແປງ

**ມາດຕາ 4 ການຫັນສິດນຳໃຊ້ທີ່ດິນ, ເຮືອນ ແລະພາຫະນະ ທີ່ລັດຄຸ້ມຄອງ**

ການຫັນສິດນຳໃຊ້ທີ່ດິນ, ເຮືອນ ແລະພາຫະນະທີ່ລັດຄຸ້ມຄອງໃຫ້ປະຕິບັດ ດັ່ງນີ້:

1. ການຫັນສິດໃຊ້ທີ່ດິນ ທີ່ລັດຄຸ້ມຄອງ ເປັນສິດນຳໃຊ້ສ່ວນບຸກຄົນ ໃຫ້ພະນັກງານປະຕິວັດອາວຸໂສເຂົ້າການປະຕິວັດປີ 1954 ຄືນຫຼັງ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ພະນັກງານ, ທະຫານ, ຕຳຫຼວດ, ພະນັກງານບຳນານ, ພະນັກງານເສຍອົງຄະ ຍັງປະຈຳການ ແລະເສຍຊີວິດໃນໜ້າທີ່ ຊຶ່ງເຂົ້າການປະຕິວັດ ແຕ່ວັນທີ 31 ທັນວາ ປີ 1974 ຄືນຫຼັງ ຈະໄດ້ຮັບນະໂຍບາຍໃຫ້ລ້າເນື້ອທີ່ດິນຜູ້ລະໜຶ່ງຕອນບໍ່ເກີນ 800 ຕາແມັດ ຕາມເນື້ອທີ່ດິນຜູ້ກ່ຽວພວມອາໄສຢູ່; ສຳລັບເນື້ອທີ່ດິນສ່ວນເກີນ 800 ຕາແມັດ ຂຶ້ນໄປ ຕ້ອງຊຳລະເງິນຢ່າງຄົບຖ້ວນໃຫ້ລັດໃນໄລຍະເວລາບໍ່ໃຫ້ເກີນ 10 ປີ ຕາມມູນຄ່າທີ່ດິນແຕ່ລະເຂດ ທີ່ຄະນະກຳມະການປະເມີນ ແລະໃຫ້ຄິດໄລ່ຕາມໄລຍະປີເຂົ້າການປະຕິວັດ ດັ່ງລຸ່ມນີ້:

| ລຳດັບ | ໄລຍະເຂົ້າການປະຕິວັດ | ອັດຕາສ່ວນຮ້ອຍຊຳລະເງິນໃຫ້ລັດ |
|---|---|---|
| 1 | ຜູ້ເຂົ້າການປີ 1954 ຄືນຫຼັງ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະພະນັກງານເສັຍອົງຄະພິເສດ | ຫ້າສ່ວນຮ້ອຍ (5%) |
| 2 | ຜູ້ເຂົ້າການປີ 1955-1960 | ສິບສ່ວນຮ້ອຍ (10%) |
| 3 | ຜູ້ເຂົ້າການປີ 1961-1965 | ສິບຫ້າສ່ວນຮ້ອຍ (15%) |
| 4 | ຜູ້ເຂົ້າການປີ 1966-1970 | ຊາວສ່ວນຮ້ອຍ (20%) |
| 5 | ຜູ້ເຂົ້າການປີ 1971-ວັນທີ 31 ທັນວາ 1974 | ຊາວຫ້າສ່ວນຮ້ອຍ (25%) |

ສຳລັບຜູ້ທີ່ມີສັນຍາໃນການຫັນສິດນຳໃຊ້ທີ່ດິນ ຕາມດຳລັດ ສະບັບເລກທີ 343/ນຍ, ລົງວັນທີ 25 ກັນຍາ 2007 ໃນໄລຍະຜ່ານມາແມ່ນໃຫ້ຢຸດຈ່າຍ ແລະໃຫ້ປະຕິບັດຕາມດຳລັດສະບັບນີ້, ສ່ວນຜູ້ທີ່ໄດ້ຊຳລະເງິນແລ້ວລັດຈະບໍ່ສົ່ງເງິນຄືນ.

2. ການຫັນສິດໃຊ້ເຮືອນທີ່ລັດຄຸ້ມຄອງເປັນສິດນຳໃຊ້ສ່ວນບຸກຄົນ ໃຫ້ພະນັກງານປະຕິວັດອາວຸໂສເຂົ້າການປະຕິວັດປີ 1954 ຄືນຫຼັງ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະພະນັກງານເສຍອົງຄະພິເສດ ດ້ວຍຮູບການໃຫ້ລ້າ;

ສຳລັບພະນັກງານ, ທະຫານ, ຕຳຫຼວດ, ພະນັກງານບຳນານ, ພະນັກງານເສັຍອົງຄະ ທີ່ຍັງປະຈຳການ ແລະເສັຍຊີວິດໃນໜ້າທີ່ ຊຶ່ງເຂົ້າການປະຕິວັດ ແຕ່ວັນທີ 31 ທັນວາ ປີ 1974 ຄືນຫຼັງ ຕ້ອງຊຳລະເງິນຢ່າງຄົບຖ້ວນໃຫ້ລັດໃນໄລຍະເວລາບໍ່ໃຫ້ເກີນ 10 ປີ ຕາມມູນຄ່າເຮືອນ ທີ່ຄະນະກຳມະການປະເມີນ ແລະໃຫ້ຄິດໄລ່ຕາມໄລຍະປີເຂົ້າການປະຕິວັດ ດັ່ງລຸ່ມນີ້:

| ລຳດັບ | ໄລຍະເຂົ້າການປະຕິວັດ | ອັດຕາສ່ວນຮ້ອຍຊຳລະເງິນໃຫ້ລັດ |
|---|---|---|
| 1 | ຜູ້ເຂົ້າການປີ 1955-1960 | ຫ້າສ່ວນຮ້ອຍ (5%) |
| 2 | ຜູ້ເຂົ້າການປີ 1961-1965 | ສິບສ່ວນຮ້ອຍ (10%) |
| 3 | ຜູ້ເຂົ້າການປີ 1966-1970 | ສິບຫ້າສ່ວນຮ້ອຍ (15%) |
| 4 | ຜູ້ເຂົ້າການປີ 1971-ວັນທີ 31 ທັນວາ 1974 | ຊາວສ່ວນຮ້ອຍ (20%) |

ສຳລັບຜູ້ທີ່ມີສັນຍາໃນການຫັນສິດນຳໃຊ້ເຮືອນທີ່ລັດຄຸ້ມຄອງ ຕາມດຳລັດສະບັບເລກທີ 343/ນຍ, ລົງວັນທີ 25 ກັນຍາ 2007 ແມ່ນໃຫ້ສືບຕໍ່ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນ.

3. ການຫັນສິດໃຊ້ພາຫະນະທີ່ລັດຄຸ້ມຄອງ ເປັນສິດນຳໃຊ້ສ່ວນບຸກຄົນ ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ພະນັກງານບຳນານ, ພະນັກງານເສຍອົງຄະທີ່ເຂົ້າການປະຕິວັດແຕ່ ວັນທີ 31 ທັນວາ ປີ 1974 ຄືນຫຼັງ ຕ້ອງຊຳລະເງິນຢ່າງຄົບຖ້ວນໃຫ້ລັດໃນໄລຍະເວລາບໍ່ໃຫ້ເກີນ 10 ປີ ຕາມມູນຄ່າພາຫະນະ ທີ່ຄະນະກຳມະການປະເມີນໃຫ້.

**ມາດຕາ 5 ການກູ້ຢືມເງິນເພື່ອປຸກສ້າງ-ສ້ອມແປງເຮືອນ**

1. ລັດໃຫ້ກູ້ຢືມເງິນເທື່ອດຽວເພື່ອປຸກສ້າງ-ສ້ອມແປງເຮືອນ ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ພະນັກງານບຳນານ, ພະນັກງານເສັຍອົງຄະປະເພດ I-IV ທີ່ຍັງປະຈຳການ, ທີ່ຍັງມີຊີວິດ ແລະເຂົ້າການປະຕິວັດແຕ່ປີ 1955 ຫາ ວັນທີ 31 ທັນວາ ປີ 1974, ສຳລັບຜູ້ທີ່ອາໃສຢູ່ເຮືອນ ແລະທີ່ດິນທີ່ລັດຄຸ້ມຄອງ ເຊິ່ງໄດ້ຫັນສິດນຳໃຊ້ຖາວອນ ຈະບໍ່ໄດ້ຮັບເງິນສົມທົບປຸກສ້າງ-ສ້ອມແປງຕາມດຳລັດສະບັບນີ້.

2. ຈຳນວນເງິນກູ້ຢືມປຸກສ້າງ-ສ້ອມແປງສູງສຸດບໍ່ເກີນ 30,000,000 ກີບ, ໄລຍະການຈ່າຍເງິນກູ້ຢືມປຸກສ້າງ-ສ້ອມແປງເຮືອນຄືນໃຫ້ລັດ ໃນໄລຍະເວລາບໍ່ເກີນ 10 ປີ ຊຶ່ງຕ້ອງຈ່າຍເງິນໃຫ້ຄືນຖ້ອນຕາມໄລຍະຂອງການປະຕິວັດ ແລະຕາມອັດຕາສ່ວນຮ້ອຍ ດັ່ງນີ້:

| ລ/ດ | ເປົ້າໝາຍ | ອັດຕາສ່ວນຮ້ອຍ ທີ່ຕ້ອງຊຳລະເງິນຄືນໃຫ້ລັດ |
|---|---|---|
| 1 | ຜູ້ເຂົ້າການປີ 1955-1960 | ຫ້າສ່ວນຮ້ອຍ (5%) |
| 2 | ຜູ້ເຂົ້າການປີ 1961-1965 | ສິບສ່ວນຮ້ອຍ (10%) |
| 3 | ຜູ້ເຂົ້າການປີ 1966-1970 | ສິບຫ້າສ່ວນຮ້ອຍ (15%) |
| 4 | ຜູ້ເຂົ້າການປີ 1971-ວັນທີ 31 ທັນວາ 1974 | ຊາວສ່ວນຮ້ອຍ (20%) |

3. ເປົ້າໝາຍທີ່ຈະໄດ້ພິຈາລະນາຮັບນະໂຍບາຍເງິນກູ້ຢືມປຸກສ້າງ-ສ້ອມແປງ ແມ່ນຜູ້ທີ່ທຸກຍາກຈະຖືເປັນເປົ້າໝາຍບູລິມະສິດໃນການແກ້ໄຂພິຈາລະນາກ່ອນ.

4. ສຳລັບຜູ້ທີ່ໄດ້ກູ້ຢືມເງິນເພື່ອປຸກສ້າງ-ສ້ອມແປງຕາມ ດຳລັດ 343/ນຍ, ລົງວັນທີ 25 ກັນຍາ 2007 ໃຫ້ສືບຕໍ່ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນ ແລະຜູ້ທີ່ໄດ້ຮັບນະໂຍບາຍເງິນສົມທົບປຸກສ້າງ-ສ້ອມແປງ ໃນໄລຍະຜ່ານມາຈະບໍ່ໄດ້ຮັບນະໂຍບາຍຕາມດຳລັດສະບັບນີ້.

5. ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ພະນັກງານອາວຸໂສທີ່ເຂົ້າການປະຕິວັດ ປີ 1954 ຄືນຫຼັງ, ຈະບໍ່ໄດ້ຮັບນະໂຍບາຍກູ້ຢືມເງິນເພື່ອປຸກສ້າງ-ສ້ອມແປງ ຕາມດຳລັດສະບັບນີ້.

## ໝວດທີ 3
## ການໃຫ້ເງິນປ່ຽນແທນໂກຕາລົດ, ການອຸດໜູນນາມມະຍົດ ແລະການອຸດໜູນເສັຍຊີວິດໃຫ້ວິລະຊົນແຫ່ງຊາດ ແລະນັກຮົບແຂ່ງຂັນ

### ມາດຕາ 6 ການໃຫ້ເງິນປ່ຽນແທນໂກຕາລົດ

ລັດໃຫ້ເງິນປ່ຽນແທນໂກຕາລົດແກ່ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະພະນັກງານອາວຸໂສ ທີ່ເຂົ້າການປະຕິວັດແຕ່ປີ 1954 ຄືນຫຼັງ ທີ່ໄດ້ຮັບບຳນານ ຫຼືຜູ້ກ່ຽວເສັຍຊີວິດໃນໜ້າທີ່ ຊຶ່ງມີອາຍຸການປະຕິວັດ 10 ປີ ຕໍ່ເນື່ອງຂຶ້ນໄປ ຄິດໄລ່ໃຫ້ດັ່ງນີ້:

- ວິລະຊົນແຫ່ງຊາດ ຄິດໄລ່ຕາມດັດຊະນີເງິນເດືອນພື້ນຖານລັດບໍລິຫານ ຊັ້ນ 4 ຂັ້ນ 10 ຄູນກັບມູນຄ່າດັດຊະນີ 6,700 ກີບ ເປັນຕົວຕັ້ງໃນການຄິດໄລ່ຕະຫຼອດໄປ ຄູນກັບ 45 ປີການ ທີ່ທຽບໃຫ້;
- ນັກຮົບແຂ່ງຂັນ ຄິດໄລ່ຕາມດັດຊະນີເງິນເດືອນພື້ນຖານລັດບໍລິຫານ ຊັ້ນ 4 ຂັ້ນ 10 ຄູນກັບມູນຄ່າດັດຊະນີ 6,700 ກີບ ເປັນຕົວຕັ້ງໃນການຄິດໄລ່ຕະຫຼອດໄປ ຄູນກັບ 40 ປີການ ທີ່ທຽບໃຫ້.
- ພະນັກງານອາວຸໂສ ທີ່ເຂົ້າການປະຕິວັດແຕ່ປີ 1954 ຄືນຫຼັງ ຄິດໄລ່ຕາມດັດຊະນີເງິນເດືອນພື້ນຖານລັດບໍລິຫານ ຊັ້ນ 4 ຂັ້ນ 10 ຄູນກັບມູນຄ່າດັດຊະນີ 6,700 ກີບ ເປັນຕົວຕັ້ງໃນການຄິດໄລ່ຕະຫຼອດໄປ ຄູນກັບຈຳນວນປີການ ຂອງຜູ້ກ່ຽວ;

ຖ້າທ່ານໃດເປັນພະນັກງານອາວຸໂສ ເຂົ້າການປະຕິວັດ ປີ 1954 ຄືນຫຼັງ ທັງເປັນວິລະຊົນແຫ່ງຊາດ ຫຼືນັກຮົບແຂ່ງຂັນ ແມ່ນໃຫ້ເລືອກເອົາເປົ້າໝາຍດຽວທີ່ສູງກວ່າ.